# ຮູ້ສິດທິຂອງທ່ານ

**VOTE 2016**

*ໃນຖານະທີ່ທ່ານເປັນຜູ້ລົງຄະແນນສຽງໃນລັດມິນນີໂຊຕາ*
*ທ່ານມີສິດຫຼາຍສິດ - ຮູ້ສິດນັ້ນ!*

## ໄດ້ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກ
ຫລຸດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ

## ລົງຄະແນນສຽງຖ້າຢູ່ໃນແຖວແຕ່8 ໂມງແລງ

ທ່ານມີສິດທີ່ຈະລົງຄະແນນສຽງໄດ້ຖ້າວ່າທ່ານຢູ່ໃນແຖວເພື່ອລົງ
ຄະແນນສຽງກ່ອນ 8 ໂມງແລງ

## ລົງທະບຽນໃນວັນເລືອກຕັ້ງ

ທ່ານມີສິດທີ່ຈະລົງທະບຽນເພື່ອລົງຄະແນນສຽງໃນວັນເລືອກຕັ້ງ
ຖ້າວ່າທ່ານສາມາດສະແດງໃຫ້ເຫັນຫລັກຖານສະແດງທີ່ຢູ່ອາໄສທີ່
ກຳນົດໄວ້

## ເຊັນຊື່ປາກເປົ່າ

ທ່ານມີສິດຢືນຢັນປາກເປົ່າວ່າທ່ານແມ່ນໃຜ ແລະມີສິດຂໍໃຫ້ຄົນ
ອື່ນເຊັນຊື່ໃຫ້ທ່ານຖ້າວ່າທ່ານບໍ່ສາມາດເຊັນຊື່ຂອງທ່ານເອງໄດ້.

## ຮ້ອງຂໍການຊ່ວຍເຫຼືອ

ທ່ານມີສິດທີ່ຈະຂໍໃຫ້ຜູ້ໃດຜູ້ໜຶ່ງຊ່ວຍເຫຼືອໄດ້
ຍົກເວັ້ນຕົວແທນຂອງນາຍຈ້າງຂອງທ່ານ ຫຼືສະຫະພາບແຮງຂອງທ່ານ, ຫຼືຜູ້ລົງສະໝັກ

## ເອົາເດັກນ້ອຍມາສະຖານທີ່ເລືອກຕັ້ງ

ທ່ານມີສິດທີ່ຈະເອົາເດັກນ້ອຍຂອງທ່ານມານຳທ່ານເມື່ອມາລົງຄະແນນສຽງ

### ວັນທີຂອງປີ 2016

**ການເລືອກຕັ້ງຂັ້ນຕົ້ນ**
*ວັນອັງຄານ, ວັນທີ 9 ສິງຫາ*

**ລົງຄະແນນສຽງຈະນົດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 23 ກັນຍາ ເຖິງ 7 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 18 ຕຸລາ ເພື່ອຊ່ວຍປະຢັດເວລາໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**
*ວັນອັງຄານ ວັນທີ8 ເດືອນພຶດສະຈິກາ*

*ມີຕໍ່ ຂ້າງຫລັງ...*

**Minneapolis Elections & Voter Services**
**vote.minneapolismn.gov • 311**

Minneapolis
Elections and Voter Services

# ຮູ້ສິດຂອງທ່ານ

VOTE 2016

*...ຕໍ່ຈາກຂ້າງໜ້າ*

## *ລົງຄະແນນສຽງຫຼັງຈາກການໃຊ້ໂທດຖານໜັກ*

ທ່ານສາມາດລົງຄະແນນສຽງໄດ້ຫລັງຈາກທີ່ທ່ານໃຊ້ໂທດຂອງທ່ານທັງໝົດສໍາເລັດແລ້ວ, ລວມທັງ ການຝາກໂທດໃດໆ, ການປ່ອຍຕົວພົ້ນໂທດແບບມີເງື່ອນໄຂ, ຫຼືເງື່ອນໄຂອື່ນໆ ເຊັ່ນ ການຊົດເຊີຍຄ່າເສຍຫາຍ

## *ລົງຄະແນນສຽງໃນຂະນະທີ່ຢູ່ພາຍໃຕ້ການປົກຄອງຜູ້ອື່ນ*

ທ່ານມີສິດທີ່ຈະລົງຄະແນນສຽງຖ້າວ່າທ່ານຢູ່ພາຍໃຕ້ການປົກຄອງຜູ້ອື່ນ ເວັ້ນເສຍແຕ່ວ່າຜູ້ພິພາກສາໄດ້ຍົກເລີກສິດໃນການລົງຄະແນນສຽງຂອງທ່ານ

## *ລົງຄະແນນສຽງໂດຍບໍ່ມີການຢູ່ພາຍໃຕ້ອິດທິພົນໃດໆ*

ທ່ານມີສິດທີ່ຈະລົງຄະແນນສຽງໂດຍບໍ່ມີໃຜໃນສະຖານທີ່ເລືອກຕັ້ງພະຍາຍາມມີອິດທິພົນໃນການລົງຄະແນນສຽງຂອງທ່ານ

## *ປ່ຽນເອົາບັດລົງຄະແນນສຽງບັດໃໝ່ທົດແທນບັດເກົ່າ*

ທ່ານມີສິດປ່ຽນເອົາບັດລົງຄະແນນສຽງບັດໃໝ່ແທນບັດເກົ່າຖ້າວ່າທ່ານໝາຍໃນບັດລົງຄະແນນສຽງຜິດກ່ອນທີ່ທ່ານຈະປ່ອນບັດ

## *ຍື່ນຄໍາຮ້ອງຮຽນ*

ທ່ານມີສິດທີ່ຈະຍື່ນຄໍາຮ້ອງຮຽນເປັນລາຍລັກອັກສອນທີ່ສະຖານທີ່ເລືອກຕັ້ງຂອງທ່ານຖ້າວ່າທ່ານບໍ່ພໍໃຈກັບວິທີການໃນການເລືອກຕັ້ງ.

## *ເອົາບັດລົງຄະແນນສຽງຕົວຢ່າງມານໍາ*

ທ່ານມີສິດທີ່ຈະເອົາບັດລົງຄະແນນສຽງຕົວຢ່າງເຂົ້າໄປນໍາໃນບູດລົງຄະແນນສຽງ

## *ເອົາບັດສິດທິຂອງຜູ້ລົງຄະແນນສຽງມານໍາ*

ທ່ານມີສິດທີ່ຈະເອົາບັດສິດທິຂອງຜູ້ລົງຄະແນນສຽງເຂົ້າໄປໃນບູດລົງຄະແນນສຽງນໍາ

**Minneapolis Elections & Voter Services**
**vote.minneapolismn.gov • 311**

Minneapolis
Elections and Voter Services